ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 2545 /ກສ

ນະຄອນຫຼວງວຽງຈັນ, ວັນທີ 11 JUN 2026

# ຂໍ້ຕົກລົງ
## ວ່າດ້ວຍ ຜະລິດຕະພັນໄມ້ເພື່ອຈຳໜ່າຍພາຍໃນ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;
- ອີງຕາມ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 2413/ກປມ, ລົງວັນທີ 22 ເມສາ 2026;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ສະບັບເລກທີ 3077/ຫກ, ລົງວັນທີ 03 ມິຖຸນາ 2026.

**ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງ:**

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ປະເພດ, ຮູບແບບ ແລະ ຂະໜາດ ຂອງຜະລິດຕະພັນໄມ້ ເພື່ອຊຸກຍູ້, ສົ່ງເສີມການປຸງແຕ່ງໄມ້ ຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝ ທີ່ສ້າງມູນຄ່າເພີ່ມ ໃຫ້ແກ່ຜະລິດຕະພັນພາຍໃນ ແລະ ເປັນບ່ອນອີງໃນການຄຸ້ມຄອງ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ແນໃສ່ຮັບປະກັນຜະລິດຕະພັນໄມ້ໃຫ້ໄດ້ຕາມມາດຕະຖານ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ຜະລິດຕະພັນໄມ້ເພື່ອຈຳໜ່າຍພາຍໃນ**

ຜະລິດຕະພັນໄມ້ເພື່ອຈຳໜ່າຍພາຍໃນ ແມ່ນ ຜະລິດຕະພັນ ທີ່ໄດ້ມາຈາກ ການນຳເອົາວັດຖຸດິບໄມ້ ໄປຜ່ານຂະບວນການປຸງແຕ່ງ ເພື່ອໃຫ້ກາຍເປັນຜະລິດຕະພັນໄມ້ ເລື່ອຍແປຮູບ, ເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ເພື່ອຕອບສະໜອງໃຫ້ແກ່ການຊົມໃຊ້ພາຍໃນ ຕາມປະເພດ ແລະ ຂະໜາດ ຂອງຜະລິດຕະພັນໄມ້.

**ມາດຕາ 3 ປະເພດຜະລິດຕະພັນໄມ້ເພື່ອຈຳໜ່າຍພາຍໃນ**

ຜະລິດຕະພັນໄມ້ເພື່ອຈຳໜ່າຍພາຍໃນ ປະກອບມີ ສາມ ປະເພດ ດັ່ງນີ້:

1. ຜະລິດຕະພັນ ໄມ້ເລື່ອຍແປຮູບ;
2. ຜະລິດຕະພັນ ໄມ້ເຄິ່ງສຳເລັດຮູບ;
3. ຜະລິດຕະພັນ ໄມ້ສຳເລັດຮູບ.

**ມາດຕາ 4 ຜະລິດຕະພັນໄມ້ເລື່ອຍແປຮູບ**

ຜະລິດຕະພັນໄມ້ເລື່ອຍແປຮູບ ແມ່ນ ຜະລິດຕະພັນ ທີ່ຜ່ານຂະບວນການນຳເອົາໄມ້ທ່ອນມາເລື່ອຍ ເປັນໄມ້ເລື່ອຍແປຮູບ ຊຶ່ງປະກອບດ້ວຍ ໄມ້ຕົງຕັບ, ໄມ້ແປຮູບ ແລະ ໄມ້ຊອຍ ທີ່ມີຂະໜາດຄວາມ ໜາ, ກວ້າງ ແລະ

ຍາວ ຕາມມາດຕະຖານຜະລິດຕະພັນໄມ້ເລື່ອຍແປຮູບ ທີ່ກຳນົດໄວ້ ຕາຕະລາງ 01 ຂອງຂໍ້ຕົກລົງສະບັບນີ້.

ຕາຕະລາງ **01:** ຜະລິດຕະພັນໄມ້ເລື່ອຍແປຮູບ

| ລຳດັບ | ລາຍການຜະລິດຕະພັນ ໄມ້ເລື່ອຍແປຮູບ ( **Sawn wood products**) | | ຂະໜາດ **Size (cm)** | | |
|---|---|---|---|---|---|
| | ຊື່ເປັນພາສາລາວ | **English** | ໜາ/**Thick** | ກວ້າງ/**Wide** | ຍາວ/ **Length** |
| **1.** | ໄມ້ຕີຕັບ (ໄມ້ເລື່ອຍຂະໜາດໃຫຍ່) | **Big size sawed timber** | **≥20** | **≥20** | **≥100** |
| **2.** | ໄມ້ແປຮູບ | **General type of sawed timber** | | | |
| 2.1 | ໄມ້ 4 x 8 | | 4 | 8 | ≤800 |
| 2.2 | ໄມ້ 5 x 10 | | 5 | 10 | ≤800 |
| 2.3 | ໄມ້ 5 x 12 | | 5 | 12 | ≤800 |
| 2.4 | ໄມ້ 5 x 15 | | 5 | 15 | ≤800 |
| 2.5 | ໄມ້ 6 x 12 | | 6 | 12 | ≤800 |
| 2.6 | ໄມ້ 6 x 18 | | 6 | 18 | ≤800 |
| 2.7 | ໄມ້ 6 x 20 | | 6 | 20 | ≤800 |
| 2.8 | ໄມ້ 2 x 30 | | 2 | 30 | ≤800 |
| 2.9 | ໄມ້ 3 x 30 | | 3 | 30 | ≤800 |
| 3. | ໄມ້ຊອຍ | | | | |
| 3.1 | ໄມ້ 1 x 2 | | 1 | 2 | _ |
| 3.2 | ໄມ້ 2 x 2 | formulated sawn woods | 2 | 2 | _ |
| 3.3 | ໄມ້ 3 x 3 | | 3 | 3 | _ |
| 3.4 | ໄມ້ 3 x 5 | | 3 | 5 | _ |
| 3.5 | ໄມ້ 3 x 6 | | 3 | 6 | _ |
| 3.6 | ໄມ້ 3 x 7 | | 3 | 7 | _ |
| 3.7 | ໄມ້ 3 x 8 | | 3 | 8 | _ |
| 3.8 | ໄມ້ 4 x 4 | | 4 | 4 | _ |
| 3.9 | ໄມ້ 5 x 5 | | 5 | 5 | _ |

**ມາດຕາ 5 ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ**

ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ແມ່ນ ຜະລິດຕະພັນ ທີ່ໄດ້ຜ່ານຂະບວນການປຸງແຕ່ງ ຈາກການ ອົບ ຫຼື ຕາກແດດ, ຕັດຂະໜາດ, ປາດໄສ້ງ ແລະ ຂຶ້ນຮູບຕ່າງໆ ແຕ່ບໍ່ສາມາດປະກອບເຂົ້າກັນໄດ້ ຕາມການອອກແບບ ເປັນໜຶ່ງຊຸດ ຫຼື ໜຶ່ງຫຼັງ ບໍ່ສາມາດນຳໃຊ້ໄດ້ເລີຍ.

ຜະລິດຕະພັນໄມ້ເຄິ່ງສຳເລັດຮູບມີ ສອງ ຮູບແບບ ຄື: ຮູບແບບເປັນໜ່ວຍ ຫຼື ເປັນຊຸດ ທີ່ບໍ່ສາມາດ ນຳໃຊ້ໄດ້ເລີຍ ແລະ ບໍ່ສາມາດປະກອບເຂົ້າກັນໄດ້ ແລະ ຮູບແບບເປັນຊິ້ນສ່ວນ ທີ່ບໍ່ສາມາດນຳໃຊ້ໄດ້ເລີຍ.

ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ປະກອບມີ ໄມ້ປອກ, ໄມ້ຝານ, ໄມ້ປົກ, ໄມ້ສັບ, ໄມ້ສຳລັບກໍ່ສ້າງ, ໄມ້ປະກອບໃນອາຄານ, ໄມ້ປະກອບຖັງລົດ, ຜະລິດຕະພັນ ໄມ້ເຄິ່ງສຳເລັດຮູບອື່ນໆ ທີ່ມີຂະໜາດ ແລະ ຮູບແບບ ຄ້າຍຄືກັບຜະລິດຕະພັນໄມ້ສຳເລັດຮູບໃດໜຶ່ງ ຕາມມາດຕະຖານຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ທີ່ກຳນົດໄວ້ ຕາຕະລາງ 02 ຂອງຂໍ້ຕົກລົງສະບັບນີ້.

ຕາຕະລາງ **02:** ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ

| ລຳດັບ | ລາຍການ ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ (**Semi-finished Wood Products**) | | ຂະໜາດ **Size (cm)** | | |
|---|---|---|---|---|---|
| | ຊື່ເປັນພາສາລາວ | **English** | ໜາ/**Thick** | ກວ້າງ/**Wide** | ຍາວ/**Length** |
| **1.** | ໄມ້ປອກ, ໄມ້ຝານ | **Veneer, slicing board** | | | |

| ລຳດັບ | ລາຍການ ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ (Semi-finished Wood Products) | | ຂະໜາດ Size (cm) | | |
|---|---|---|---|---|---|
| | ຊື່ເປັນພາສາລາວ | English | ໜາ/Thick | ກວ້າງ/Wide | ຍາວ/Length |
| 1.1 | ໄມ້ປອກ | Veneer | 0.03 | 130 | ≤ 250 |
| 1.2 | ໄມ້ຝານ | slicing board | 0.03 | 130 | ≤ 250 |
| 2. | ໄມ້ສຳລັບການກໍ່ສ້າງ | **Builder's Carpentry and Construction** | | | |
| **2.1** | ໄມ້ໂຄງຫຼັງຄາ | **Roof Structure** | | | |
| 2.1.1 | ໄມ້ເອິກໄກ່ | Wooden roof | 5 | 20 | ≤ 800 |
| 2.1.2 | ໄມ້ໂຄງເພດານ | Ceiling frame | 5 | 10 | ≤ 800 |
| 2.1.3 | ໄມ້ຂ້າວ | Roof beams | 5 | 10 | ≤ 800 |
| 2.1.4 | ໄມ້ສີຢິວ | Purlin prop | 5 | 15 | ≤ 800 |
| 2.1.5 | ໄມ້ຂຶກແປ | Struts | 5 | 10 | ≤ 800 |
| 2.1.6 | ໄມ້ເສົາດັ້ງ | King post | 5 | 15 | ≤ 800 |
| 2.1.7 | ໄມ້ປ້ານລົມ, ປ້ານຊາຍ | Rafter | 3 | 25 | ≤ 800 |
| 2.1.8 | ໄມ້ຂື່ | Anti slip block | 5 | 20 | ≤ 800 |
| 2.1.9 | ໄມ້ຄໍສອງ | Top plate of wall | 5 | 20 | ≤ 800 |
| 2.2 | ໄມ້ເສົາໂຊ | Column | 30 | 30 | ≤ 800 |
| 2.3 | ໄມ້ຂາງໜີບ | Mounding | 5 | 20 | ≤ 800 |
| 2.4 | ໄມ້ແປ້ນພື້ນ | Lumber | 3 | 30 | ≤ 800 |
| 2.5 | ໄມ້ແປ້ນແອ້ມ | Wood Siding | 2 | 20 | ≤ 800 |
| 2.6 | ໄມ້ຕົງ | Rafter | 5 | 10 | ≤ 800 |
| 2.7 | ໄມ້ຂາງ | Beam | 5 | 20 | ≤ 800 |
| 3. | ໄມ້ປະກອບອາຄານ (ຊິ້ນສ່ວນ) | **Builder's carpentry and Joinery** | | | |
| **3.1** | ປະຕູ | **Door** | | | |
| 3.1.1 | ໄມ້ວົງກົບປະຕູ | Door frame | 15 | 20 | ≤ 300 |
| 3.1.2 | ໄມ້ບານປະຕູ | Panel of door | 5 | 150 | ≤ 300 |
| 3.1.3 | ໄມ້ຂອບບານປະຕູ | Door Pa Frame | 10 | 20 | ≤ 300 |
| **3.2** | ປ່ອງຢ້ຽມ(ໄມ້ຂອບປ່ອງຢ້ຽມ) | **Window** | | | |
| 3.2.1 | ໄມ້ວົງກົບປ່ອງຢ້ຽມ | Window frame | 15 | 20 | ≤ 300 |
| 3.2.2 | ໄມ້ບານປ່ອງຢ້ຽມ | Window panel | 5 | 150 | ≤ 300 |
| 3.2.3 | ໄມ້ຂອບບານປ່ອງຢ້ຽມ | Window Panel Frame | 10 | 20 | ≤ 300 |
| 3.3 | ລູກຕັ້ງ | Window spiral stair | 20 | 20 | ≤ 150 |
| 3.4 | ໄມ້ຂອບ, ຄິ້ວ, ສາຍບົວ | Molding | 3 | 15 | ≤ 650 |
| 3.5 | ແມ່ຂັ້ນໄດ | Staircase | 10 | 30 | ≤ 600 |
| 3.6 | ແປ້ນຂັ້ນໄດຕົວນອນ | Tread | 5 | 30 | ≤ 200 |
| 3.7 | ແປ້ນຂັ້ນໄດຕົວຕັ້ງ | Riser | 3 | 20 | ≤ 200 |
| 3.8 | ຮາວພະນັກ, ຮາວຂັ້ນໄດ | Railing | 6 | 15 | ≤ 600 |
| 3.9 | ເຄື່ອງປະກອບອື່ນໆ | Others | _ | _ | _ |
| 4. | ຜະລິດຕະພັນໄມ້ເຄິ່ງສຳເລັດຮູບອື່ນໆ | **Semi wood product (Furniture)** | | | |
| 4.1 | ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ທີ່ມີຂະໜາດ ແລະ ຮູບແບບ ຄ້າຍຄືເຟີນີເຈີສຳເລັດຮູບ | Semi wood product and Furniture | | | |
| **4.2** | ຊຸດໂຊຟາໄມ້ | **Sofa** | | | |
| 4.2.1 | ຂາ | Legs | 15 | 15 | ≤ 100 |
| 4.2.2 | ຂາງ | Beams | 5 | 20 | ≤ 250 |

| ລຳດັບ | ລາຍການ ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ (Semi-finished Wood Products) | | ຂະໜາດ Size (cm) | | |
|---|---|---|---|---|---|
| | ຊື່ເປັນພາສາລາວ | English | ໜາ/Thick | ກວ້າງ/Wide | ຍາວ/Length |
| 4.2.3 | ແປ້ນໜ້າ | Boards | 5 | 65 | ≤ 250 |
| 4.2.4 | ຊິ້ນສ່ວນປະກອບອື່ນໆ | All parts | _ | _ | _ |
| **4.3** | ຊຸດໂຕະໄມ້ | **Tables** | | | |
| 4.3.1 | ຂາຫຼ່ຽມ | Legs (square) | 15 | 15 | ≤ 150 |
| 4.3.2 | ຂາກົມ | Legs (round) | 20 | 20 | ≤ 150 |
| 4.3.3 | ຂາງ | Beams | 5 | 15 | ≤ 250 |
| 4.3.4 | ແປ້ນໜ້າ | Boards | 5 | 120 | ≤ 250 |
| 4.3.5 | ຊິ້ນສ່ວນປະກອບອື່ນໆ | All parts | _ | _ | _ |
| **4.4** | ຊຸດຕັ່ງໄມ້ | **Chairs** | | | |
| 4.4.1 | ຂາຫຼ່ຽມ | Legs (square) | 15 | 15 | ≤ 150 |
| 4.4.2 | ຂາກົມ | Legs (round) | 20 | 20 | ≤ 150 |
| 4.4.3 | ຂາງ | Beams | 5 | 15 | ≤ 250 |
| 4.4.4 | ແປ້ນໜ້າ | Boards | 5 | 50 | ≤ 250 |
| 4.4.5 | ຊິ້ນສ່ວນປະກອບອື່ນໆ | All parts | _ | _ | _ |
| **4.5** | ຊຸດຕູ້ໄມ້ | **Cabinets** | | | |
| 4.5.1 | ຂາ | Legs | 5 | 10 | ≤ 300 |
| 4.5.2 | ຂາງ, ໄມ້ເຊັນ | Beams | 5 | 10 | ≤ 300 |
| 4.5.3 | ແປ້ນໜ້າ | Boards | 5 | 60 | ≤ 300 |
| 4.5.4 | ຊິ້ນສ່ວນປະກອບອື່ນໆ | All parts | _ | _ | _ |
| **4.6** | ຊຸດຕຽງໄມ້ | **Mattress** | | | |
| 4.6.1 | ຂາຕຽງ | Legs | 15 | 15 | ≤ 100 |
| 4.6.2 | ແປ້ນຂາງຕຽງ | Beams | 5 | 40 | ≤ 220 |
| 4.6.3 | ແປ້ນຫົວຕຽງ | Boards | 5 | 60 | ≤ 220 |
| 4.6.4 | ຊິ້ນສ່ວນປະກອບອື່ນໆ | All parts | _ | _ | _ |
| **4.7** | ເຄື່ອງຕົບແຕ່ງຕ່າງໆທີ່ເປັນເຟີນີເຈີ ທີ່ເຮັດດ້ວຍໄມ້ | **Decorative at furniture of woods** | | | |
| **4.8** | ຜະລິດຕະພັນເຄິ່ງສຳເລັດຮູບ ທີ່ມີຂະໜາດ ແລະ ຮູບແບບຄ້າຍ ຄື ໄມ້ ປັກເກ້, ໄມ້ປູພື້ນ, ໄມ້ປະກອບຖັງລົດ | **parquet, wood flooring and truck body joinery** | | | |
| **4.9** | ໄມ້ປັກເກ້ | **parquet floorings** | | | |
| 4.9.1 | ໄມ້ປັກເກ້ປູພື້ນ ແລະ ປັກເກ້ອື່ນໆ | parquet/ random flooring | 3 | 15 | ≤ 120 |
| 4.9.2 | ໄມ້ປູພື້ນແບບຕໍ່ເສັ້ນ-ຕໍ່ແຜ່ນທຸກຊະນິດ | FJL flooring | 3 | 20 | ≤ 650 |
| 4.9.3 | ໄມ້ປູພື້ນແບບໂມເສດ | Wood mosaic flooring | 5 | 50 | ≤ 50 |
| **4.10** | ໄມ້ປູພື້ນ | **wood flooring** | | | |
| 4.10.1 | ໄມ້ປູພື້ນແບບດ້ານໜຶ່ງມີຮ່ອງກັນມື່ນ | ULIN decking | 5 | 20 | ≤ 650 |
| 4.10.2 | ໄມ້ປູພື້ນແບບໜ້າລຽບ | ELO decking | 5 | 20 | ≤ 650 |
| 4.10.3 | ໄມ້ປູພື້ນແບບມີລີ້ນ ແລະ ມີຮ່ອງຮອບຕົວ | tongue and grove flooring | 5 | 20 | ≤ 650 |
| 4.10.4 | ໄມ້ປູພື້ນແບບມີລີ້ນ ແລະ ມີຮ່ອງປະສົມ | tongue and grove lamin flooring | 5 | 20 | ≤ 650 |
| **5.** | ໄມ້ປະກອບຖັງລົດ | **truck body joiner** | | | |

| ລຳດັບ | ລາຍການ ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ (Semi-finished Wood Products) | | ຂະໜາດ Size (cm) | | |
|---|---|---|---|---|---|
| | ຊື່ເປັນພາສາລາວ | English | ໜາ/Thick | ກວ້າງ/Wide | ຍາວ/Length |
| 5.1 | ໄມ້ຂາງ | Truck's flooring | 10 | 15 | ≤250 |
| 5.2 | ແປ້ນປູພື້ນ | truck's floorings | 5 | 15 | ≤650 |
| 5.3 | ຝາຂ້າງ | gate boards | 5 | 15 | ≤300 |
| **6.** | ໄມ້ເຊື່ອມຕໍ່ປະສານ | **Laminated** | | | |
| 6.1 | ຂາຫຼ່ຽມ | Legs (square) | _ | _ | _ |
| 6.2 | ໜ້າໂຕະ | Table of big piece | _ | _ | _ |
| 6.3 | ຜະລິດຕະພັນໄມ້ເຊື່ອມຕໍ່ປະສານ ຊະນິດອື່ນໆ | | _ | _ | _ |
| 7. | ໄມ້ບົດ ຫຼື ໄມ້ສັບ | **Wood MDF or Chips** | | | |
| 7.1 | ໄມ້ບົດ | Wood MDF | _ | _ | _ |
| 7.2 | ໄມ້ສັບ | Wood Chips | _ | _ | _ |

ມາດຕາ **6** ຜະລິດຕະພັນໄມ້ສຳເລັດຮູບ

ຜະລິດຕະພັນໄມ້ສຳເລັດຮູບ ແມ່ນ ຜະລິດຕະພັນ ທີ່ຜ່ານຂະບວນການປຸງແຕ່ງ ຈາກການ ກົບ, ບາກ, ເຈາະຮູ, ແລ່ນຮ່ອງ, ປາດເຕືອຍ, ຂັດເງົາ, ລົງສີ ຫຼື ບໍ່ລົງສີ ແລະ ຈັບນ໋ອດ ທີ່ສາມາດນຳໃຊ້ໄດ້ເລີຍ ຫຼື ແຍກອອກ ຫຼື ປະກອບເຂົ້າກັນໄດ້ (Knock-down).

ຜະລິດຕະພັນ ໄມ້ສຳເລັດຮູບ ມີ ສອງ ຮູບແບບ ຄື: ຮູບແບບທີ່ເປັນໜ່ວຍ ຫຼື ເປັນຊຸດສຳເລັດຮູບ ແລະ ຮູບແບບທີ່ເປັນຊິ້ນສ່ວນ ສາມາດປະກອບເຂົ້າກັນທີ່ນຳໃຊ້ໄດ້ເລີຍ.

ຜະລິດຕະພັນ ໄມ້ສຳເລັດຮູບ ປະກອບມີ ຜະລິດຕະພັນ ໄມ້ປີກເກ້ ຫຼື ປູພື້ນ, ໄມ້ອັດ, ພາຊະນະບັນຈຸທີ່ເຮັດດ້ວຍໄມ້, ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້, ຜະລິດຕະພັນໄມ້ປະກອບໃນອາຄານ, ເຄື່ອງຫັດຖະກຳ ທີ່ເຮັດດ້ວຍໄມ້, ເຄື່ອງເຟີນິເຈີທີ່ເຮັດດ້ວຍໄມ້, ຂີ້ເລື່ອຍ ອັດແທ່ງ ຫຼື ອັດເມັດ ແລະ ຜະລິດຕະພັນຖ່ານໄມ້ ຕາມມາດຕະຖານຜະລິດຕະພັນໄມ້ສຳເລັດຮູບ ທີ່ກຳນົດໄວ້ ຕາຕະລາງ 03 ຂອງຂໍ້ຕົກລົງສະບັບນີ້.

ຕາຕະລາງ **03:** ຜະລິດຕະພັນ ໄມ້ສຳເລັດຮູບ

| ລຳດັບ | ລາຍການ ຜະລິດຕະພັນ ໄມ້ສຳເລັດຮູບ (Finished Wood Products) | | ຂະໜາດ Size (cm) | | |
|---|---|---|---|---|---|
| | ພາສາລາວ Lao | ພາສາອັງກິດ English | ໜາ/ Thick | ກວ້າງ/ Wide | ຍາວ/ Length |
| **1.** | ຜະລິດຕະພັນຂີ້ເລື່ອຍ ອັດແທ່ງ ຫຼື ອັດເມັດ | **Wooden briquettes and pellets** | | | |
| 1.1 | ຂີ້ເລື່ອຍ ອັດແທ່ງ | Wooden briquettes | _ | _ | _ |
| 1.2 | ຂີ້ເລື່ອຍ ອັດເມັດ | Wooden pellets | _ | _ | _ |
| **2.** | ຜະລິດຕະພັນຖ່ານໄມ້ | **Wooden charcoal** | | | |
| 2.1 | ຖ່ານຂາວ | White charcoal | _ | _ | _ |
| 2.2 | ຖ່ານອັດແທ່ງ ຫຼື ອັດເມັດຈາກຂີ້ເລື່ອຍ | Sawdust charcoal | _ | _ | _ |
| 2.3 | ຖ່ານຄາບອນທີ່ມີລັກສະນະກະຕຸ້ນໃຫ້ມີພະລັງງານ ປະຕິກິລິຍາ ໂດຍສານເຄມີ ຫຼື ຖ່ານກັ່ນຕອງ ດູດຊຶມ | Activated carbon | _ | _ | _ |
| **3.** | ຜະລິດຕະພັນ ໄມ້ປີກເກ້ ແລະ ໄມ້ປູພື້ນ | **Wooden parquets and interior flooring** | | | |
| **3.1** | ຜະລິດຕະພັນໄມ້ປີກເກ້ | **Parquets** | | | |
| 3.1.1 | ໄມ້ປີກເກ້ຊິ້ນດຽວ | Solid parquet | _ | _ | _ |
| 3.1.2 | ໄມ້ປີກເກ້ເຊື່ອມຕໍ່ປະສານ | FJL parquet | _ | _ | _ |
| 3.1.3 | ໄມ້ປີກເກ້ໂມເສກ | Mosaic parquet | _ | _ | _ |

| ລຳດັບ | ລາຍການ ຜະລິດຕະພັນ ໄມ້ສຳເລັດຮູບ (Finished Wood Products) | | ຂະໜາດ Size (cm) | | |
|---|---|---|---|---|---|
| | ພາສາລາວ Lao | ພາສາອັງກິດ English | ໜາ/ Thick | ກວ້າງ/ Wide | ຍາວ/ Length |
| **3.2** | ຜະລິດຕະພັນໄມ້ປູພື້ນ | **Flooring** | | | |
| 3.2.1 | ໄມ້ປູພື້ນຊິ້ນດຽວ | Solid/OPC Flooring | – | – | – |
| 3.2.2 | ໄມ້ປູພື້ນແບບເຊື່ອມຕໍ່ | UNI flooring | – | – | – |
| 3.2.3 | ໄມ້ປູພື້ນແບບເຊື່ອມຕໍ່ອັດປະສານ | FJL flooring | – | – | – |
| 3.2.4 | ໄມ້ປູພື້ນອັດແບບເປັນຊັ້ນ | Engineered flooring | – | – | – |
| 3.2.5 | ໄມ້ແຜ່ນພື້ນເດັກກິງ | Decking tile | – | – | – |
| 3.2.6 | ໄມ້ປູພື້ນແບບດ້ານເທິງມີຮ່ອງກັນມື່ນ | Reeded Decking | – | – | – |
| 3.2.7 | ໄມ້ປູພື້ນກົບລົບມູມ 4 ດ້ານ | S4S E4E Decking | – | – | – |
| **3.3** | ຜະລິດຕະພັນໄມ້ແອ້ມຝາ ແລະ ເພດານ | **Wall and ceiling panel** | | | |
| 3.3.1 | ໄມ້ເພດານແບບຮ່ອງ ຫຼື ບໍ່ມີຮ່ອງ | ceiling panel | – | – | – |
| 3.3.2 | ໄມ້ເພດານແບບເຊື່ອມຕໍ່ປະສານ | FJL ceiling panel | – | – | – |
| 3.3.3 | ໄມ້ແອ້ມຝາ ຫຼື ເພດານແບບອັດເປັນຊັ້ນ | Engineering panel | – | – | – |
| 3.4 | ຜະລິດຕະພັນໄມ້ຕໍ່ເປັນເສັ້ນ (ໄມ້ຈອຍ) | Finger joint wood | – | – | – |
| **4.** | ຜະລິດຕະພັນ ໄມ້ອັດ | **plywood** | | | |
| 4.1 | ໄມ້ອັດ ຈາກຂີ້ເລື່ອຍ ແລະ ຂີ້ກົບ | Particle board | – | – | – |
| 4.2 | ໄມ້ອັດ ຈາກໄມ້ບົດ | MDF board/ HDF board/OSB board | – | – | – |
| 4.3 | ໄມ້ອັດ ຈາກໃຍໄມ້ | Fiber Board | – | – | – |
| 4.4 | ໄມ້ອັດ ຈາກໄມ້ປອກ | Plywood from veneers | – | – | – |
| 4.5 | ໄມ້ອັດ ບູອກບອດ | Block board | – | – | – |
| 4.6 | ໄມ້ອັດ ປະສານ ສຳລັບໜ້າໂຕະ | Laminated board for table top | – | – | – |
| 4.7 | ໄມ້ອັດ ປະສານ ສຳລັບໄມ້ເຄື່ອງເຮືອນ | LVL | – | – | – |
| 4.8 | ໄມ້ອັດ ປະສານ | Mix plywood | – | – | – |
| 4.9 | ໄມ້ອັດ ເຊື່ອມຕໍ່ປະສານ | FJL board | – | – | – |
| 4.10 | ໄມ້ອັດ ຈາກເສດໄມ້ | particle board | – | – | – |
| 4.11 | ໄມ້ອັດ ອື່ນໆ | other wood boards | – | – | – |
| **5.** | ພາຊະນະບັນຈຸ ທີ່ເຮັດດ້ວຍໄມ້ | | | | |
| 5.1 | ໄມ້ຫີບ ຫຼື ແກັດ | Suitcase Wood | – | – | – |
| 5.2 | ໄມ້ກ່ອງ ຫຼື ກັບ | Boxes Wood | – | – | – |
| 5.3 | ໄມ້ລັງ | Crates Wood | – | – | – |
| 5.4 | ໄມ້ຖັງໝັກ | Vats Wood | – | – | – |
| 5.5 | ໄມ້ແກນມ້ວນສາຍກາບທຸກຊະນິດ | All wood cable drums | – | – | – |
| 5.6 | ພະເລດ | Pallets | – | – | – |
| 5.6.1 | ໄມ້ໜ້າພະເລດ | Wood board | – | – | – |
| 5.6.2 | ໄມ້ຄານພະເລດ | Beam | – | – | – |
| 5.6.3 | ໄມ້ຕີນພະເລດ | | – | – | – |
| **6.** | ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້ | **Wooden handle products** | | | |
| 6.1 | ຂອບສຳລັບຮູບແຕ້ມ, ຂອບຮູບ, ຂອບແວ່ນ | Wooden frames for paintings, photographs and mirrors | – | – | – |
| 6.2 | ເຄື່ອງຫຸ້ມຫໍ່ ຫຼື ເຄື່ອງບັນຈຸ ທີ່ເຮັດດ້ວຍໄມ້ ແລະ ແກນມ້ວນສາຍກາບ ທີ່ເຮັດດ້ວຍໄມ້ | Packing cases, boxes, crates, drums and similar packing, wood cable drums | – | – | – |

| ລຳດັບ | ລາຍການ ຜະລິດຕະພັນ ໄມ້ສຳເລັດຮູບ (Finished Wood Products) | | ຂະໜາດ Size (cm) | | |
|---|---|---|---|---|---|
| | ພາສາລາວ Lao | ພາສາອັງກິດ English | ໜາ/ Thick | ກວ້າງ/ Wide | ຍາວ/ Length |
| 6.2.1 | ຫີບ, ກັບ, ແກັດ, ລັງ, ຖັງ ແລະ ແກນມ້ວນ ສາຍກາບ ທີ່ເຮັດດ້ວຍໄມ້ | cases, boxes, crates and wood cable drums | _ | _ | _ |
| 6.2.2 | ແຜ່ນຖາດ/ຖາດຮອງ (ພາເລດ) ແລະ ຖາດ ໃສ່ຂອງອື່ນໆ ທີ່ໃຊ້ສຳລັບຮອງ ແລະ ເຄື່ອນ ຍ້າຍສິນຄ້າ | Pallets, box pallets and other wooden load boards | _ | _ | _ |
| **6.3** | ຖັງ ແລະ ອ່າງ ເຮັດດ້ວຍໄມ້ | **Wooden barrels, staves** | | | |
| 6.3.1 | ຖັງ | Staves | _ | _ | _ |
| 6.3.2 | ອ່າງ | barrels | _ | _ | _ |
| **6.4** | ດ້າມເຄື່ອງມືທີ່ເຮັດດ້ວຍໄມ້ | **Tools, tool handles of wood** | | | |
| 6.4.1 | ດ້າມຟອຍ ຫຼື ແປງ ແລະ ອື່ນໆ ຮັບໃຊ້ການ ຜະລິດ | Tool handles, broom or brush bodies | _ | _ | _ |
| 6.4.2 | ຮູບຫຸ່ນເກີບບູດ, ສົ້ນເກີບ | Handles, boot or shoe lasts of wood | _ | _ | _ |
| **7.** | ຜະລິດຕະພັນໄມ້ປະກອບໃນອາຄານ | **Builders' joinery and carpentry of wood** | | | |
| **7.1** | ຊຸດປ່ອງຢ້ຽມ | **Window set** | | | |
| 7.1.1 | ວົງກົບປ່ອງຢ້ຽມ ສຳເລັດຮູບ | Window frames | _ | _ | _ |
| 7.1.2 | ບານປ່ອງຢ້ຽມ ສຳເລັດຮູບ | Windows | _ | _ | _ |
| **7.2** | ຊຸດປະຕູ | **Doors set** | | | |
| 7.2.1 | ວົງກົບປະຕູ ສຳເລັດຮູບ | Door frames | _ | _ | _ |
| 7.2.2 | ບານປະຕູ ສຳເລັດຮູບ | Doors | _ | _ | _ |
| 7.2.3 | ບານປະຕູ ຕູ້ (ຕູ້ເສື້ອຜ້າ, ຕູ້...) | Cabinet doors | _ | _ | _ |
| 7.3 | ແຜ່ນໄມ້ມຸງຫຼັງຄາ | Wooden shingles | _ | _ | _ |
| 7.4 | ແຜ່ນໄມ້ຮົ້ວ | Wooden fences | _ | _ | _ |
| 7.5 | ແຜ່ນໄມ້ປະກອບແບບລາຍໂມເສກ | Assembled flooring panel for mosaic floor | _ | _ | _ |
| 7.6 | ຜະລິດຕະພັນໄມ້ ຂອບອັດເປັນຊັ້ນ | Multilayer scantlings | _ | _ | _ |
| **7.7** | ຊຸດຂັ້ນໄດ | **set of staircases** | | | |
| 7.7.1 | ແປ້ນຂັ້ນໄດຕົວນອນ | Horizontal stair board | _ | _ | _ |
| 7.7.2 | ແປ້ນຂັ້ນໄດຕົວຕັ້ງ | Vertical stair board | _ | _ | _ |
| **7.8** | ຜະລິດຕະພັນໄມ້ລູກຕັ້ງ | **Balustrades timber products** | | | |
| 7.8.1 | ລູກຕັ້ງ ຮູບຊົງກົມ | Round balustrade | _ | _ | _ |
| 7.8.2 | ລູກຕັ້ງ ຮູບຊົງສີ່ລ່ຽມ | Square balustrade | _ | _ | _ |
| **8.** | ເຄື່ອງຫັດຖະກຳ ທີ່ເຮັດດ້ວຍໄມ້ | **Other articles of wood** | | | |
| 8.1 | ຜະລິດຕະພັນ ທີ່ໃຊ້ເທິງໂຕະອາຫານ, ເຮືອນຄົວ ເຊັ່ນ: ຖ້ວຍ, ຊາມ, ຖາດ, ໂອ່ງ, ຈານ, ໄມ້ກະດ້າມ, ປ່ວງ, ສ້ອມ, ດ້າມມີດ. | Tableware and kitchenware of wood | _ | _ | _ |
| **8.2** | ຂຽງ | **Cutting boards** | | | |
| 8.2.1 | ຂຽງ ສີ່ຫຼ່ຽມຍາວ | Square Cutting boards | _ | _ | _ |
| 8.2.2 | ຂຽງ ສີ່ຫຼ່ຽມ ໄມ້ອັດປະສານ | End Grain Cutting boards | _ | _ | _ |
| 8.2.3 | ຂຽງ ສີ່ຫຼ່ຽມ ໄມ້ຊິ້ນດຽວ | OPC Square Cutting boards | _ | _ | _ |
| 8.2.4 | ຂຽງ ໜ້າມົນ | Round Cutting boards | _ | _ | _ |

| ລຳດັບ | ລາຍການ ຜະລິດຕະພັນ ໄມ້ສຳເລັດຮູບ (Finished Wood Products) | | ຂະໜາດ Size (cm) | | |
|---|---|---|---|---|---|
| | ພາສາລາວ Lao | ພາສາອັງກິດ English | ໜາ/ Thick | ກວ້າງ/ Wide | ຍາວ/ Length |
| **8.3** | ຜະລິດຕະພັນເຄື່ອງຫັດຖະກຳໄມ້ ແລະ ເຄື່ອງໄມ້ ແກະສະຫຼັກ, ແຜ່ນໄມ້ ແກະສະຫຼັກ | **Wooden handicrafts and carving products, carving boards** | | | |
| 8.3.1 | ແຜ່ນໄມ້ແກະສະຫຼັກແປັນແຜ່ນດຽວ | Wooden board carving products | – | – | – |
| 8.3.2 | ຕໍໄມ້, ປຸ່ມໄມ້ ແກະສະຫຼັກ ແລະ ຄວັດ | Wooden spur carving or handicraft | – | – | – |
| 8.3.3 | ໄມ້ແກະສະຫຼັກ ຫຼື ຄວັດ | Wooden carving or handicraft | – | – | – |
| 8.4 | ຜະລິດຕະພັນຂໍເກາະເສື້ອ | Wooden clothes hangers | – | – | – |
| 8.5 | ຜະລິດຕະພັນແກນ, ຫຼອດ, ກະສວຍ, ຫຼອດດ້າຍຍິບຜ້າ | Cops and bobbins, sewing in thread reels | – | – | – |
| 8.6 | ໄມ້ຈີ້ມແຂ້ວ | toothpicks | – | – | – |
| 8.7 | ໄມ້ທູ່ ເຮັດດ້ວຍໄມ້ເນື້ອແຂງ | Chopsticks made of hardwoods | – | – | – |
| 8.8 | ລູກປັດສຳລັບນັກບວດ, ໄມ້ກ້ານສໍ | prayer beads, pencils | – | – | – |
| 8.9 | ເຄື່ອງດົນຕີ ທີ່ເຮັດດ້ວຍໄມ້ | Musical instruments of wood. | – | – | – |
| **9.** | ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້ | **Wooden furniture** | | | |
| 9.1 | ຊຸດ ໂຊຟາໄມ້, ໂຊຟາໄມ້ຫຸ້ມເບາະ ສຳເລັດຮູບ | sofar | – | – | – |
| 9.2 | ຕັ່ງໄມ້, ຕັ່ງໄມ້ຫຸ້ມເບາະ ສຳເລັດຮູບ | Wooden chairs | – | – | – |
| **9.3** | ໂຕະໄມ້ສຳເລັດ | **Wooden table** | | | |
| 9.3.1 | ໂຕະໄມ້ສຳເລັດຮູບ | Wooden tables | – | – | – |
| 9.3.2 | ໂຕະໜ້າມົນໄມ້ແຜ່ນດຽວ ສຳເລັດຮູບ | Wooden round table | – | – | – |
| 9.4 | ຕູ້ໄມ້ສຳເລັດຮູບ | Wooden cabinets | – | – | – |
| **9.5** | ຕຽງໄມ້ສຳເລັດຮູບ | **Wooden Bed** | | | |
| 9.5.1 | ໄມ້ປູພື້ນຕຽງນອນ | Bed Centre slats | – | – | – |
| 9.5.2 | ຂອບຕຽງນອນ | Side rail | – | – | – |
| 9.5.3 | ຂາງຕຽງ | Bed slats | – | – | – |
| 9.5.4 | ຫົວຕຽງ | Headboard | – | – | – |
| 9.5.5 | ຕີນຕຽງ | Footboard | – | – | – |
| 9.5.6 | ເສົາຕີນຕຽງ | Footboard leg | – | – | – |
| 9.5.7 | ເສົາຫົວຕຽງ | Headboard leg | – | – | – |
| **9.6** | ເຄື່ອງຕົບແຕ່ງ ທີ່ເປັນເຟີນີເຈີເຮັດດ້ວຍໄມ້ | **Decorative and furniture of wood** | | | |
| 9.6.1 | ເຄື່ອງເຟີນີເຈີ ໃຊ້ໃນຫ້ອງການ | furniture of a kind used in office | – | – | – |
| 9.6.2 | ເຄື່ອງເຟີນີເຈີ ໃຊ້ໃນຄົວເຮືອນ | furniture of a kind used in kitchen | – | – | – |
| 9.6.3 | ເຄື່ອງເຟີນີເຈີ ໃຊ້ໃນຫ້ອງນອນ | furniture of a kind used in bedroom | – | – | – |
| 9.7 | ຜະລິດຕະພັນເຟີນີເຈີ ຈາກຕໍໄມ້ສຳເລັດຮູບ | furniture of wooden stump | – | – | – |
| 9.8 | ໂຕະໄມ້ທຳມະຊາດແປັນແຜ່ນດຽວສຳເລັດຮູບ | Finished wooden table of a big piece of timber | – | – | – |

| ລຳດັບ | ລາຍການ ຜະລິດຕະພັນ ໄມ້ສຳເລັດຮູບ (Finished Wood Products) | | ຂະໜາດ Size (cm) | | |
|---|---|---|---|---|---|
| | ພາສາລາວ Lao | ພາສາອັງກິດ English | ໜາ/ Thick | ກວ້າງ/ Wide | ຍາວ/ Length |
| 9.9 | ຜະລິດຕະພັນ ໂລງສົບສຳເລັດຮູບ | wooden Coffin | _ | _ | _ |
| 9.10 | ຜະລິດຕະພັນ ເຮືອນນ້ອຍ, ຕູບ, ສານພະພູມ | wooden Hut | _ | _ | _ |

**ມາດຕາ 7 ຂະໜາດຜະລິດຕະພັນໄມ້**

ຂະໜາດຜະລິດຕະພັນໄມ້ ແມ່ນ ການກຳນົດ ຄວາມ ໜາ, ກວ້າງ ແລະ ຍາວ ຂອງຜະລິດຕະພັນໄມ້ ແຕ່ລະປະເພດ ເພື່ອໃຫ້ການປຸງແຕ່ງ ຖືກຕ້ອງຕາມຈຸດປະສົງ, ມາດຕະຖານ ແລະ ມີຄວາມເປັນທຳໃຫ້ແກ່ ຜູ້ຊົມໃຊ້. ຂະໜາດຂອງແຕ່ລະປະເພດ ຜະລິດຕະພັນໄມ້ ແມ່ນໄດ້ກຳນົດຢູ່ໃນມາດຕາ 4, 5 ແລະ ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້.

ຜະລິດຕະພັນໄມ້ ທີ່ມີຂະໜາດແຕກຕ່າງຈາກຂໍ້ຕົກລົງສະບັບນີ້ ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງໄດ້ນຳສະເໜີ ຫາກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເພື່ອຄົ້ນຄວ້າ ແລະ ພິຈາລະນາ ຕາມລະບຽບການ.

**ມາດຕາ 8 ການຂຶ້ນບັນຊີຜະລິດຕະພັນໄມ້**

ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງຂຶ້ນບັນຊີຜະລິດຕະພັນໄມ້ ດ້ວຍຕົນເອງ ແລ້ວສົ່ງໃຫ້ຂະແໜງປ່າໄມ້ (ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ) ທຸກໆ ສາມ ເດືອນ. ການຂຶ້ນບັນຊີຜະລິດຕະພັນໄມ້ ໃຫ້ຖືກຕ້ອງຕາມຄວາມເປັນຈິງ ຕາມປະເພດ, ຮູບແບບ, ຂະໜາດ ແລະ ລັກສະນະ ຂອງຜະລິດຕະພັນ.

**ມາດຕາ 9 ການຢັ້ງຢືນມາດຕະຖານຜະລິດຕະພັນໄມ້**

ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຫາກມີຄວາມຈຳເປັນ ຫຼື ມີຄວາມຕ້ອງການຂອງຕະຫຼາດ ໃຫ້ສະເໜີ ຫາ ຂະແໜງປ່າໄມ້ ເພື່ອອອກໃບຢັ້ງຢືນ ມາດຕະຖານ ຜະລິດຕະພັນໄມ້ ຕາມລະບຽບການ ບົນພື້ນຖານການ ຮັບຮູ້ ແລະ ຢັ້ງຢືນ ຈາກພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ.

**ມາດຕາ 10 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມປ່າໄມ້, ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໂຄສະນາເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 11 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 29 ກໍລະກົດ 2026 ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍ ຜະລິດຕະພັນໄມ້ ສະບັບເລກທີ 4645/ກປ, ລົງວັນທີ 11 ກັນຍາ 2024.

ລັດຖະມົນຕີ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ລັດຖະມົນຕີ

ປອ. ລິນຄຳ ດວງສະຫວັນ